ກະຊວງສາທາລະນະສຸກ

# ຈັນຍາບັນວິຊາຊີບ
# ສຳລັບພະຍາບານ-ຜະດຸງຄັນ

ສິງຫາ 2019

ສະພາຄຸ້ມຄອງວິຊາຊີບປິ່ນປົວ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ

ສະພາຄຸ້ມຄອງວິຊາຊີບປິ່ນປົວ

ເລກທີ 0147 /ສວປ

ນະຄອນຫຼວງວຽງຈັນ, ວັນທີ 02 AUG 2019

# ຂໍ້ຕົກລົງ

## ວ່າດ້ວຍການຮັບຮອງເອົາຈັນຍາບັນວິຊາຊີບສໍາລັບພະຍາບານ-ຜະດຸງຄັນ

- ອີງຕາມ ຍຸດທະສາດວ່າດ້ວຍລະບົບການອອກໃບອະນຸຍາດປະກອບວິຊາຊີບປິ່ນປົວ ແລະ ການຂຶ້ນທະບຽນ ຂອງ ສປປ ລາວ ແຕ່ປີ 2016-2025 ສະບັບເລກທີ 2098/ສທ, ລົງວັນທີ 03 ທັນວາ 2015;
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງສາທາລະນະສຸກ ວ່າດ້ວຍສະພາຄຸ້ມຄອງວິຊາຊີບປິ່ນປົວ ສະບັບເລກທີ 0131/ສທ, ລົງວັນທີ 19 ມັງກອນ 2017;
- ອີງຕາມ ການຄົ້ນຄວ້າ ແລະ ສະເໜີ ຂອງຄະນະກໍາມະການວິຊາຊີບປິ່ນປົວການພະຍາບານ-ຜະດຸງຄັນ.

### ປະທານສະພາຄຸ້ມຄອງວິຊາຊີບປິ່ນປົວ ຕົກລົງ:

**ມາດຕາ 1.** ເຫັນດີຮັບຮອງເອົາ ຈັນຍາບັນວິຊາຊີບສໍາລັບພະຍາບານ-ຜະດຸງຄັນ.

**ມາດຕາ 2.** ມອບໃຫ້ຫ້ອງການຄຸ້ມຄອງວິຊາຊີບປິ່ນປົວ, ຄະນະກໍາມະການວິຊາຊີບປິ່ນປົວການພະຍາບານ-ຜະດຸງຄັນ ເປັນໃຈກາງ ສົມທົບກັບພາກສ່ວນກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດການເຜີຍແຜ່, ການຝຶກອົບຮົມ ຈັນຍາບັນວິຊາຊີບສໍາລັບພະຍາບານ-ຜະດຸງຄັນສະບັບນີ້, ພ້ອມທັງຊຸກຍູ້ຕິດຕາມ ແລະ ກວດກາ ການເຄື່ອນໄຫວດ້ານຈັນຍາບັນຂອງພະຍາບານ-ຜະດຸງຄັນ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

**ມາດຕາ 3.** ໃຫ້ຫ້ອງການກະຊວງສາທາລະນະສຸກ, ກົມປິ່ນປົວ ແລະ ຟື້ນຟູໜ້າທີ່ການ, ກົມຈັດຕັ້ງ ແລະ ພະນັກງານ, ກົມການສຶກສາສາທາລະນະສຸກ, ບັນດາຄະນະກໍາມະການວິຊາຊີບປິ່ນປົວ(ບອດ)ຂອງສະພາຄຸ້ມຄອງວິຊາຊີບປິ່ນປົວ, ມະຫາວິທະຍາໄລວິທະຍາສາດສຸຂະພາບ, ໂຮງໝໍ, ສູນ, ສະຖາບັນ, ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງພ້ອມກັນປະຕິບັດຂໍ້ຕົກລົງສະບັບນີ້ ຕາມໜ້າທີ່ຂອງໃຜລາວ.

**ມາດຕາ 4.** ຂໍ້ຕົກລົງສະບັບນີ້ມີຜົນສັກສິດນໍາໃຊ້ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ປະທານສະພາຄຸ້ມຄອງວິຊາຊີບປິ່ນປົວ**

ສະພາຄຸ້ມຄອງວິຊາຊີບປິ່ນປົວ

ດຣ ປອນເມກ ດາລາລອຍ

<u>ບ່ອນນໍາສົ່ງ:</u>

| | |
|---|---|
| 1.ປະທານ, ຮອງປະທານ ສວປ ທ່ານລະ | 01 ສະບັບ |
| 2.ຄະນະກໍາມະການວິຊາຊີບປິ່ນປົວການ ພບ-ຜດ ທ່ານລະ | 01 ສະບັບ |
| 3.ຫ້ອງການຄຸ້ມຄອງວິຊາຊີບປິ່ນປົວ | 01 ສະບັບ |
| 4.ຫ້ອງການກະຊວງ, ກົມກອງທີ່ກ່ຽວຂ້ອງ ບ່ອນລະ | 01 ສະບັບ |
| 5.ມວສ, ໂຮງໝໍ, ສູນ ບ່ອນລະ | 01 ສະບັບ |
| 6.ສໍາເນົາໄວ້ | 02 ສະບັບ |

# ສາລະບານ

ໜ້າ

ຄຳນຳ:.......................................................................................................................................1
ຈຸດປະສົງ:....................................................................................................................................2
ຈັນຍາບັນພະຍາບານ-ຜະດຸງຄັນຕໍ່ສັງຄົມ ແລະ ປະເທດຊາດ:..............................................................2
ຈັນຍາບັນພະຍາບານ-ຜະດຸງຄັນຕໍ່ປະຊາຊົນ/ຄົນເຈັບ:.......................................................................2
ຈັນຍາບັນພະຍາບານ-ຜະດຸງຄັນຕໍ່ຕົນເອງ:......................................................................................2
ຈັນຍາບັນວິຊາຊີບພະຍາບານ-ຜະດຸງຄັນຕໍ່ວິຊາຊີບ:.........................................................................3
ຈັນຍາບັນພະຍາບານ-ຜະດຸງຄັນຕໍ່ພະຍາບານ-ຜະດຸງຄັນດ້ວຍກັນ:.......................................................3
ຈັນຍາບັນ ພະຍາບານ-ຜະດຸງຄັນຕໍ່ຜູ້ປະກອບວິຊາຊີບປິ່ນປົວອື່ນໆ:.....................................................3
ອະທິບາຍຄຳສັບ:..........................................................................................................................4

# ຈັນຍາບັນວິຊາຊີບສຳລັບພະຍາບານ-ຜະດຸງຄັນ

## ຄຳນຳ

ວິຊາຊີບພະຍາບານ-ຜະດຸງຄັນ ມີຄຸນລັກສະນະທີ່ສຳຄັນຄື ການມີຄວາມເມດຕາທີ່ຈະຊ່ວຍເຫຼືອເພື່ອນມະນຸດຜູ້ເຈັບປ່ວຍທັງດ້ານຮ່າງກາຍ, ຈິດໃຈໃຫ້ຢູ່ໃນພາວະຂອງຄວາມສຸກສະບາຍ, ຫລຸດຜ່ອນຄວາມວິຕົກກັງວົນ, ຕໍ່ສູ້ກັບສິ່ງທີ່ເກີດຂຶ້ນກັບຕົນເອງໄດ້ຢ່າງມີກຳລັງໃຈ ອົບອຸ່ນ ຄືນສູ່ສະພາບສຸຂະພາບທີ່ປົກກະຕິ, ຮູ້ດູແລຮັກສາສຸຂະພາບຕົນເອງໃນເວລາປົກກະຕິ. ດ້ວຍເຫດຜົນນີ້ນອກຈາກຄວາມເສຍສະລະ, ອຸທິດແຮງກາຍແຮງໃຈແລ້ວ ພະຍາບານຍັງຕ້ອງເປັນຜູ້ທີ່ມີຄວາມຮູ້, ຄວາມຊຳນານ, ຄວາມສາມາດໃນການໃຊ້ເຕັກໂນໂລຢີ, ປະສົມປະສານຄວາມຮູ້ດ້ານອື່ນໆມາປະກອບໃນການດູແລຄົນເຈັບ.

ຕໍ່ສະພາບການປ່ຽນແປງຂອງສັງຄົມ ແລະ ຄວາມກ້າວໜ້າທາງດ້ານວິທະຍາສາດການແພດ ແລະ ເຕັກໂນໂລຢີເຮັດໃຫ້ເກີດຜົນກະທົບຫຼາຍຢ່າງຕໍ່ວິທີການດຳລົງຊີວິດຂອງມະນຸດ ລວມເຖິງສະພາບຄວາມເຈັບປ່ວຍ ແລະ ຜົນກະທົບຫຼາຍຢ່າງຕໍ່ວິທີການດຳລົງຊີວິດຂອງມະນຸດ ແລະ ກະທົບຕໍ່ການໃຫ້ການບໍລິການພະຍາບານ-ຜະດຸງຄັນ, ເນື່ອງຈາກວ່າໃນປະຈຸບັນຜູ້ຮັບບໍລິການມີຄວາມຕ້ອງການການປິ່ນປົວລະບັດຮັກສາທີ່ມີຄຸນນະພາບສູງຂຶ້ນ ຊຶ່ງເປັນສິ່ງທ້າທາຍ ຕໍ່ການປະຕິບັດໜ້າທີ່ ພະຍາບານ-ຜະດຸງຄັນ ຍັງບໍ່ອາດຈະຫຼີກລ້ຽງບັນຫາທາງຈັນຍາທຳຫຼາຍຢ່າງທີ່ມີຜົນຕໍ່ການຕັດສິນໃຈໃນການປະຕິບັດການພະຍາບານ-ຜະດຸງຄັນທີ່ສອດຄ່ອງກັບຄວາມຕ້ອງການຂອງຜູ້ຮັບບໍລິການ.

ການກຳນົດຈັນຍາບັນພະຍາບານ-ຜະດຸງຄັນ ມີຈຸດປະສົງ ເພື່ອເປັນບ່ອນອີງໃຫ້ແກ່ພະຍາບານ-ຜະດຸງຄັນ ໃນການປະພຶດ ແລະ ປະຕິບັດຕໍ່ຕົນເອງ ແລະ ຕໍ່ຜູ້ອື່ນ, ເປັນແນວທາງໃນການຕັດສິນໃຈ ແລະ ການປະຕິບັດການພະຍາບານ-ຜະດຸງຄັນ, ສົ່ງເສີມ ປົກປ້ອງຄຸ້ມຄອງສິດທິພື້ນຖານ ແກ່ພະຍາບານ-ຜະດຸງຄັນ, ຄົນເຈັບ ຄອບຄົວ ແລະ ສັງຄົມໃຫ້ມີຄວາມປອດໄພ ນອກຈາກນີ້ຈັນຍາບັນຍັງຊ່ວຍສົ່ງເສີມມາດຕະຖານ, ຄຸນນະພາບທາງການພະຍາບານ-ຜະດຸງຄັນໄດ້ໃຫ້ເປັນທີ່ຍອມຮັບ ແລະ ມີຄວາມເຊື່ອຖືຈາກສັງຄົມ.

ຈັນຍາບັນພະຍາບານ-ຜະດຸງຄັນນີ້ ສ້າງຂຶ້ນສຳລັບພະຍາບານ-ຜະດຸງຄັນໃນ ສປປ ລາວ ເຊິ່ງປະກອບດ້ວຍ ຈັນຍາບັນພະຍາບານ-ຜະດຸງຄັນຕໍ່ ສັງຄົມ ແລະ ປະເທດຊາດ, ຈັນຍາບັນພະຍາບານ-ຜະດຸງຄັນຕໍ່ປະຊາຊົນ/ຄົນເຈັບ, ຈັນຍາບັນພະຍາບານ-ຜະດຸງຄັນຕໍ່ ຕົນເອງ, ຈັນຍາບັນພະຍາບານ-ຜະດຸງຄັນຕໍ່ ວິຊາຊີບ, ຈັນຍາບັນພະຍາບານ-ຜະດຸງຄັນຕໍ່ພະຍາບານ-ຜະດຸງຄັນດ້ວຍກັນ ແລະ ຕໍ່ຜູ້ປະກອບວິຊາຊີບປິ່ນປົວອື່ນໆ. ເນື້ອໃນທັງໝົດແມ່ນກ່ຽວຂ້ອງກັບພະຍາບານ-ຜະດຸງຄັນໃນທຸກລະດັບ, ທຸກຂົງເຂດ ເຊັ່ນ: ການປະຕິບັດການພະຍາບານ-ຜະດຸງຄັນ, ການບໍລິຫານການພະຍາບານ-ຜະດຸງຄັນ, ການສຶກສາ ແລະ ການຄົ້ນຄວ້າທາງການພະຍາບານ-ຜະດຸງຄັນ. ຈັນຍາບັນພະຍາບານ-ຜະດຸງຄັນທີ່ໄດ້ກຳນົດຂຶ້ນນີ້ແມ່ນເປັນຫຼັກການ ແລະ ມາດຕະຖານ ເຊິ່ງອີງໃສ່ຫຼັກການທາງສິດທິມະນຸດ, ກົດໝາຍວ່າດ້ວຍການປິ່ນປົວ, ກົດລະບຽບການພະຍາບານ-ຜະດຸງຄັນ, ນະໂຍບາຍດ້ານເສດຖະກິດສັງຄົມ ແລະ ວັດທະນະທຳຂອງປະເທດ.

## 1. ຈຸດປະສົງ

1) ເພື່ອກຳນົດມາດຕະຖານຈັນຍາບັນພະຍາບານ-ຜະດຸງຄັນ;
2) ເພື່ອເປັນບ່ອນອີງໃຫ້ແກ່ພະຍາບານ-ຜະດຸງຄັນໃນການປະພຶດ ແລະ ປະຕິບັດຕໍ່ຕົນເອງ, ຕໍ່ວິຊາຊີບ ແລະ ຜູ້ອື່ນໆ;
3) ເພື່ອເປັນແນວທາງໃນການຕັດສິນໃຈ ແລະ ການປະຕິບັດການພະຍາບານ-ຜະດຸງຄັນ;
4) ເພື່ອໃຫ້ການປົກປ້ອງຄຸ້ມຄອງແກ່ພະຍາບານ-ຜະດຸງຄັນ, ຄົນເຈັບ,ຄອບຄົວ ແລະສັງຄົມໃຫ້ມີຄວາມປອດໄພ.

## 2. ຈັນຍາບັນ ພະຍາບານ-ຜະດຸງຄັນ ຕໍ່ ສັງຄົມ ແລະ ປະເທດຊາດ

1) ປະກອບວິຊາຊີບປິ່ນປົວພະຍາບານ-ຜະດຸງຄັນຕາມແນວທາງນະໂຍບາຍຂອງກະຊວງສາທາລະນະສຸກເພື່ອຜົນປະໂຫຍດຂອງຄົນເຈັບກໍຄືປະຊາຊົນ.
2) ຮັບຜິດຊອບສູງຮ່ວມກັບປະຊາຊົນໃນການສະໜັບສະໜູນກິດຈະກຳສົ່ງເສີມສຸກຂະພາບທີ່ເຮັດໃຫ້ເກີດສັນຕິສຸກ ແລະຍົກລະດັບຄຸນນະພາບຊີວິດໃຫ້ດີຂຶ້ນ.
3) ຮັກສາ ແລະ ສົ່ງເສີມ ສິນລະປະມູນເຊື້ອວັດທະນະທຳ ອັນດີງາມຂອງຊາດ.

## 3. ຈັນຍາບັນ ພະຍາບານ-ຜະດຸງຄັນ ຕໍ່ ປະຊາຊົນ/ຄົນເຈັບ

1) ປະກອບວິຊາຊີບຢ່າງມີສະຕິ, ໃສ່ໃຈໃນຄຸນຄ່າ ແລະສັກສີຂອງຄວາມເປັນມະນຸດ.
2) ປະຕິບັດຕໍ່ປະຊາຊົນດ້ວຍຄວາມສະເໝີພາບຕາມສິດທິມະນຸດໂດຍບໍ່ຄຳນຶງເຖິງເຊື້ອຊາດ, ສາສະໜາ ແລະ ສະຖານະພາບຂອງບຸກຄົນ.
3) ຫຼີກເວັ້ນການປະຕິບັດທີ່ມີອະຄະຕິ ແລະ ການໃຊ້ອຳນາດໜ້າທີ່ເພື່ອຜົນປະໂຫຍດຂອງຕົນ.
4) ຮັກສາຄວາມລັບຂອງຄົນເຈັບຢ່າງເຂັ້ມງວດກ່ຽວກັບພະຍາດ,ຈຸດຕຳນິ ໂດຍສະເພາະຄົນເຈັບທີ່ຍັງມີຊີວິດ ແລະ ເສັຍຊີວິດເພື່ອຜົນປະໂຫຍດຂອງຄົນເຈັບເອງ ນອກຈາກຄວາມຍິນຍອມຂອງຄົນເຈັບ ຫຼື ເມື່ອຕ້ອງປະຕິບັດ ຕາມກົດໝາຍ.
5) ປະຕິບັດໜ້າທີ່ໂດຍໃຊ້ຄວາມຮູ້ ຄວາມສາມາດທາງການພະຍາບານ-ຜະດຸງຄັນ ໂດຍໃຊ້ຂະບວນການພະຍາບານ(ການປະເມີນສະພາບຄົນເຈັບ, ການບົ່ງມະຕິການພະຍາບານ, ການວາງແຜນ, ການປະຕິບັດ ແລະ ການປະເມີນຜົນການພະຍາບານ) ໃນການດູແລ ແລະ ແກ້ໄຂບັນຫາ.

## 4. ຈັນຍາບັນ ພະຍາບານ-ຜະດຸງຄັນ ຕໍ່ ຕົນເອງ

1) ປະພຶດຕົນ ແລະ ປະກອບວິຊາຊີບໂດຍຖືກຕ້ອງຕາມກົດລະບຽບຂອງພະຍາບານ-ຜະດຸງຄັນ ແລະ ກົດໝາຍ;
2) ຍຶດໝັ້ນໃນຄຸນນະທຳ ແລະ ຈັນຍາບັນດ້ານວິຊາຊີບ.
3) ປະພຶດປະຕິບັດຕົນໃຫ້ເປັນແບບຢ່າງທີ່ດີທັງໃນດ້ານການປະກອບວິຊາຊີບ ແລະ ສ່ວນຕົວ.

4) ຊອກຮູ້ຮໍ່າຮຽນ, ພັດທະນາຄວາມຄິດໃຫ້ກວ້າງ ແລະ ຍອມຮັບການປ່ຽນແປງ.

5) ປະກອບວິຊາຊີບດ້ວຍຄວາມຮັບຜິດຊອບ, ເຕັມໃຈ ແລະ ເຕັມກຳລັງຄວາມສາມາດ.

6) ປະຕິບັດໜ້າທີ່ຢ່າງມີສະຕິ, ຮອບຮູ້, ເຊື່ອໝັ້ນ ແລະ ຮອບຄອບ.

7) ປົກປ້ອງຄຸ້ມຄອງໃນດ້ານຄວາມປອດໄພທາງດ້ານສຸຂະພາບທີ່ຖືກກະທົບຈາກການກະທຳທີ່ອາດເກີດຂຶ້ນຈາກຄວາມບໍ່ຮູ້, ຂາດສິນລະທຳ ຫຼື ການກະທຳທີ່ຜິດກົດໝາຍຂອງບຸກຄົນໃດໜຶ່ງ.

## 5. ຈັນຍາບັນວິຊາຊີບ ພະຍາບານ-ຜະດຸງຄັນ ຕໍ່ ວິຊາຊີບ

1) ເອົາໃຈໃສ່ໃນໜ້າທີ່ ແລະ ຄວາມຮັບຜິດຊອບຕາມຫຼັກວິຊາຊີບການພະຍາບານ-ຜະດຸງຄັນ.

2) ປະຕິບັດການພະຍາບານ-ຜະດຸງຄັນໃຫ້ໄດ້ມາດຕະຖານຂອງວິຊາຊີບ.

3) ພັດທະນາຄວາມຮູ້ ແລະ ວິທີປະຕິບັດໃຫ້ໄດ້ມາດຕະຖານຂອງວິຊາຊີບ.

4) ໃຫ້ຄວາມສັດທາ, ສະໜັບສະໜູນ ມຸ້ງໝັ້ນໃນການພັດທະນາວິຊາຊີບຕໍ່ເນື່ອງ.

5) ໃຫ້ຄວາມຮ່ວມມືໃນກິດຈະກຳຂອງວິຊາຊີບ.

6) ສ້າງ ແລະ ຮັກສາໄວ້ສິດທິອັນຊອບທຳໃນການປະກອບວິຊາຊີບການພະຍາບານ-ຜະດຸງຄັນ.

7) ເຜີຍແຜ່ຊື່ສຽງ ແລະ ຄຸນຄ່າຂອງວິຊາຊີບການພະຍາບານ-ຜະດຸງຄັນ ໃຫ້ແກ່ສັງຄົມ.

## 6. ຈັນຍາບັນ ພະຍາບານ-ຜະດຸງຄັນ ຕໍ່ ພະຍາບານ-ຜະດຸງຄັນດ້ວຍກັນ

1) ຮັກສາໄວ້ຄວາມສຳພັນທີ່ດີກັບເພື່ອນຮ່ວມງານພາຍໃນວິຊາຊີບ.

2) ຍອມຮັບຄວາມຕ້ອງການພື້ນຖານຂອງມະນຸດ ແລະ ຊຸກຍູ້ໃຫ້ມີການປະຕິບັດທີ່ຖືກຕ້ອງ.

3) ອຳນວຍຄວາມສະດວກ ແລະ ໃຫ້ຄວາມຮ່ວມມືກັບຜູ້ຮ່ວມງານໃນການເຮັດວຽກ.

4) ຫຼີກເວັ້ນການສົ່ງເສີມ ຫຼື ປົກປ້ອງຜູ້ປະຕິບັດທີ່ບໍ່ຖືກຕ້ອງເພື່ອຜົນປະໂຫຍດຂອງວິຊາຊີບຕົນເອງ ຫຼື ຜູ້ກະທຳ.

## 7. ຈັນຍາບັນ ພະຍາບານ-ຜະດຸງຄັນ ຕໍ່ ຜູ້ປະກອບວິຊາຊີບປິ່ນປົວອື່ນໆ

1) ໃຫ້ກຽດ, ເຄົາລົບໃນສິດທິ ແລະ ໜ້າທີ່ຂອງຜູ້ປະກອບວິຊາຊີບປິ່ນປົວອື່ນໆ.

2) ເຫັນຄຸນຄ່າ ແລະ ຍ້ອງຍໍຜູ້ມີຄວາມຮູ້ຄວາມສາມາດໃນສາຂາຕ່າງໆ.

3) ຮັກສາໄວ້ຄວາມສຳພັນທີ່ດີກັບເພື່ອນຮ່ວມງານພາຍນອກວິຊາຊີບພະຍາບານ-ຜະດຸງຄັນ.

4) ຍອມຮັບຄວາມຕ້ອງການພື້ນຖານຂອງມະນຸດ ແລະ ຊຸກຍູ້ໃຫ້ມີການປະຕິບັດທີ່ຖືກຕ້ອງ.

5) ອຳນວຍຄວາມສະດວກ ແລະ ໃຫ້ຄວາມຮ່ວມມືກັບຜູ້ຮ່ວມງານໃນວິຊາຊີບອື່ນ.

6) ຫຼີກເວັ້ນການສົ່ງເສີມ ຫຼື ປົກປ້ອງຜູ້ປະຕິບັດທີ່ບໍ່ຖືກຕ້ອງເພື່ອຜົນປະໂຫຍດຂອງວິຊາຊີບອື່ນ ຫຼື ຜູ້ກະທຳ.

7) ຮ່ວມມືກັບສະມາຊິກຂອງວິຊາຊີບທາງດ້ານສຸຂະພາບ ແລະ ບຸກຄົນອື່ນໆ ໃນສັງຄົມ ເພື່ອພັດທະນາຊຸມຊົນ ແລະ ຕອບສະໜອງຕໍ່ຄວາມຕ້ອງການທາງດ້ານສຸຂະພາບອະນາໄມ ແລະ ສັງຄົມ.

## 9. ອະທິບາຍຄຳສັບ

1) **ຈັນຍາທຳ (Ethical rules):** ໝາຍເຖິງ ກົດເກນແນວທາງຂອງຄວາມປະພຶດທີ່ມະນຸດຄວນປະພຶດສົມກັບເປັນຜູ້ທີ່ມີເຫດ, ມີຜົນ ແລະ ມີຄວາມຄິດສະຕິປັນຍາ.
2) **ຈັນຍາ (Etiquette):** ໝາຍເຖິງ ຄວາມປະພຶດກິລິຍາມາລະຍາດທີ່ຄວນປະພຶດໃນໝູ່ຄະນະເຊັ່ນ: ຈັນຍາບັນແພດ, ຈັນຍາບັນພະຍາບານ-ຜະດຸງຄັນ ແລະ ຈັນຍາບັນຄູ.
3) **ຈັນຍາບັນ (Code of Ethics):** ໝາຍເຖິງ ການປະມວນຄວາມປະພຶດທີ່ຜູ້ປະກອບອາຊີບແຕ່ລະຢ່າງກຳໜົດຂຶ້ນເພື່ອຮັກສາກຽດ, ຊື່ສຽງ ແລະ ຖານະຂອງສະມາຊິກ, ອາດຂຽນເປັນລາຍລັກອັກສອນ ເຊັ່ນ: ຈັນຍາບັນຂອງພະຍາບານກໍ່ຄືການສັງລວມຄວາມປະພຶດທີ່ອົງການຈັດຕັ້ງພະຍາບານກຳນົດຂຶ້ນເພື່ອເປັນແນວທາງສຳລັບຜູ້ເປັນພະຍາບານ ຍຶດຖືປະຕິບັດ.
4) **ສິນລະທຳ (Moral):** ໝາຍເຖິງ ຄວາມປະພຶດດີ, ຄວາມປະພຶດຖືກຕ້ອງ ສ່ວນໃຫ່ຍແລ້ວມັກໃຊ້ໃນຄວາມໝາຍທາງສາດສະໜາຄືປະພຶດຕາມຫຼັກສິນລະທຳ.
5) **ຄຸນນະທຳ (Virtue):** ໝາຍເຖິງ ຄຸນນະພາບຄຸນງາມຄວາມດີທາງຄວາມປະພຶດ ແລະ ຈິດໃຈເຊັ່ນ: ບໍ່ເວົ້າຕົວະ , ເສຍສະລະອົດທົນ ແລະ ຮັບຜິດຊອບ.
6) **ມະໂນທຳ (Conscience):** ໝາຍເຖິງ ຄວາມຮູ້ສຶກຜິດ, ຖືກ, ຊົ່ວດີ ຄວາມຮູ້ສຶກສິ່ງໃດຄວນເຮັດ ແລະ ບໍ່ຄວນເຮັດ.
7) **ມາລະຍາດ (Courtesy):** ໝາຍເຖິງ ການຄວບຄຸມກິລິຍາ ແລະ ວາຈາຕ່າງໆ ເຊັ່ນ ການຢືນ, ການຍ່າງ, ການນັ່ງ, ການຮັບ ແລະ ສົ່ງຂອງ, ການສະແດງຄວາມເຄົາລົບ, ການສະແດງກິລິຍາອາການ, ການກິນອາຫານ ການໃຫ້ ແລະ ການຮັບການບໍລິການ, ການທັກທາຍ, ການສົນທະນາ, ການໃຊ້ຄຳເວົ້າ, ການໃຊ້ເຄື່ອງມືຊື່ສານ, ລວມທັ້ງການປະພຶດການປະຕິບັດໃນພິທີການຕ່າງ.
8) **ສິດທິຂອງຄົນເຈັບ:** ໝາຍເຖິງ ສິດທິທັງຫຼາຍທີ່ຍອມຮັບກັນໃນປະເທດທີ່ມີອະຣິຍະທຳ ວ່າເປັນສິດທິພື້ນຖານທີ່ຈຳເປັນໃນການດຳລົງຊີວິດຢ່າງມີກຽດສົມກັບສັກສີຂອງຄວາມເປັນມະນຸດ ແລະ ຈຳເປັນໃນການພັດທະນາບຸກຄະລິກຂອງມະນຸດເປັນສິດທິທີ່ມີການຄຸ້ມຄອງປ້ອງກັນໃນທາງດ້ານກົດໝາຍເປັນພິເສດ ຜູ້ໃດຈະລ່ວງລະເມີດເຊິ່ງກັນ ແລະ ກັນບໍ່ໄດ້ ມະນຸດເຮົາແຕ່ລະຄົນບໍ່ວ່າຈະເກີດມາໃນຊົນເຜົ່າໃດໆ ກໍ່ມີສິດທິສ່ວນຕົວທາງດ້ານຮ່າງກາຍ, ຄວາມເຊື່ອ ແລະ ການເລືອກແນວທາງການດຳເນີນຊີວິດ.

ນະຄອນຫຼວງວຽງຈັນ, ວັນທີ 02 ສິງຫາ 2019

**ປະທານສະພາຄຸ້ມຄອງວິຊາຊີບປິ່ນປົວ**

ດຣ ປອນເມກ ດາລາລອຍ